ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ

ເລກທີ 670/ພນ
ນະຄອນຫຼວງວຽງຈັນ, ວັນທີ 19 ກໍລະກົດ 2023

# ຂໍ້ຕົກລົງ
## ວ່າດ້ວຍ ການຄຸ້ມຄອງ, ການນຳໃຊ້ເຄື່ອງແບບ ຂອງ ນາຍບ້ານ ແລະ ຮອງນາຍບ້ານ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ ສະບັບເລກທີ 575/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ໜັງສືສະເໜີຂອງກົມການປົກຄອງທ້ອງຖິ່ນ ສະບັບເລກທີ 14 /ປທ, ລົງວັນທີ 05 / 07/ 2023.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດກ່ຽວກັບ ລະບຽບການຄຸ້ມຄອງ, ການນຳໃຊ້ເຄື່ອງແບບ ຂອງ ນາຍບ້ານ ແລະ ຮອງນາຍບ້ານ ແນໃສ່ຍົກສູງບົດບາດອັນສຳຄັນຂອງຜູ້ນຳພາທີ່ຈັດຕັ້ງປະຕິບັດວຽກງານຢູ່ຂັ້ນຮາກຖານ ໃຫ້ມີຄວາມເປັນລະບຽບ, ມີເອກະລັກສະເພາະ ແລະ ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 2 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ທີ່ເປັນນາຍບ້ານ ແລະ ຮອງນາຍບ້ານ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ເຄື່ອງແບບ ແລະ ຄວາມໝາຍຂອງເຄື່ອງແບບ

**ມາດຕາ 3 ເຄື່ອງແບບ**

ເຄື່ອງແບບນາຍບ້ານ ແລະ ຮອງນາຍບ້ານ ແມ່ນຊຸດເຄື່ອງນຸ່ງທີ່ປະກອບມີ ເສື້ອ, ທະນຸບ່າ, ໂສ້ງ ຫຼື ສິ້ນ ສາຍແອວ ແລະ ເກີບ ທີ່ມີລັກສະນະສະເພາະ ດັ່ງລາຍລະອຽດ ລຸ່ມນີ້:



สแกนด้วย CamScanner

1. **ສຳລັບເພດຊາຍ**

- **ເສື້ອ**: ຊາຟາຣີ ຄໍເຊີດ ໂທນສີຟ້າກົມໝາກຄໍ້, ແຂນຍາວ ຫຼື ແຂນສັ້ນ, ແອວປ່ອຍ, ມີ 2 ຖົງປຸ້ໜ້າເອິກທີ່ມີຝາປິດ, 2 ຖົງລຸ່ມດ້ານຂ້າງບໍ່ມີຝາປິດ ແລະ ມີປ່ອງທະນຸບ່າປູ 2 ຂ້າງ;
- **ທະນຸບ່າ:** ສີພື້ນແພເປັນສີດຽວກັນກັບສີເສື້ອ, ຍາວ 12,5 ຊັງຕີແມັດ ແລະ ກວ້າງ 5 ຊັງຕີແມັດ, ປັກແສ່ວອ້ອມເປັນຂອບສີຄຳ ກວ້າງ 0,5 ຊັງຕີແມັດ ແລະ ປັກແສ່ວເປັນຂີດສາມຫຼ່ຽມສີຄຳທີ່ບົ່ງບອກຕຳແໜ່ງ;
- **ໂສ້ງ:** ໂສ້ງຂາຍາວສຸພາບ, ສີດຽວກັນກັບສີເສື້ອ, ມີ 2 ຖົງຂ້າງ ແລະ ມີ 1 ຖົງຫຼັງທີ່ມີຝາປິດ;
- **ສາຍແອວ:** ສີດຳ ຫຼື ສີນ້ຳຕານ;
- **ເກີບ:** ເກີບຫຸ້ມສົ້ນ, ສີດຳ ຫຼື ນ້ຳຕານ.

2. **ສຳລັບເພດຍິງ**

- **ເສື້ອ:** ຄໍເຊີດ ໂທນສີຟ້າກົມໝາກຄໍ້, ແຂນຍາວ ຫຼື ແຂນສັ້ນ, ແອວປ່ອຍ, ມີ 2 ຖົງລຸ່ມດ້ານໜ້າມີຝາປິດ ແລະ ມີປ່ອງທະນຸບ່າປູ 2 ຂ້າງ;
- **ທະນຸບ່າ:** ສີພື້ນແພເປັນສີດຽວກັນກັບສີເສື້ອ, ຍາວ 12,5 ຊັງຕີແມັດ ແລະ ກວ້າງ 5 ຊັງຕີແມັດ, ປັກແສ່ວອ້ອມເປັນຂອບສີຄຳ ກວ້າງ 0,5 ຊັງຕີແມັດ ແລະ ປັກແສ່ວເປັນຂີດສາມຫຼ່ຽມສີຄຳທີ່ບົ່ງບອກຕຳແໜ່ງ;
- **ສິ້ນ:** ສີດຽວກັນກັບສີເສື້ອ ແລະ ມີຕີນສິ້ນ;
- **ສາຍແອວ:** ສີດຳ ຫຼື ສີນ້ຳຕານ;
- **ເກີບ:** ເກີບໜັງຫຸ້ມສົ້ນ ສີດຳ ຫຼື ນ້ຳຕານ.

**ມາດຕາ 4 ຄວາມໝາຍຂອງເຄື່ອງແບບ**

ເຄື່ອງແບບນາຍບ້ານ ແລະ ຮອງນາຍບ້ານມີຄວາມໝາຍ ດັ່ງນີ້:

1. ສີຟ້າກົມໝາກຄໍ້ ໝາຍເຖິງ ຄວາມເຂັ້ມແຂງ, ຄວາມເປັນຜູ້ນຳ, ຄວາມຍຸຕິທຳ, ຄວາມຮັບຜິດຊອບ, ຄວາມສາມັກຄີ ແລະ ຄວາມອຸດົມສົມບູນຂອງທຳມະຊາດ;
2. ຂອບສີຄຳ ແລະ ຂີດສີຄຳໃນທະນຸບ່າ ໝາຍເຖິງ ບົດບາດທີ່ມີຄຸນຄ່າສູງສົ່ງ ແລະ ສຳຄັນ ສຳລັບຜູ້ທີ່ ຮັບໃຊ້ປະຊາຊົນ, ຮັບໃຊ້ບ້ານເມືອງ ຕາມຂອບເຂດຄວາມຮັບຜິດຊອບທີ່ຊັດເຈນ;
3. ຂີດສາມຫຼ່ຽມສີຄຳໃນທະນຸບ່າ ໝາຍເຖິງ ບ້ານ, ເຮືອນ ທີ່ຕ້ອງໄດ້ຄຸ້ມຄອງຮັບໃຊ້, ສອງຂີດໝາຍເຖິງຕຳແໜ່ງ ນາຍບ້ານ, ໜຶ່ງຂີດໝາຍເຖິງຕຳແໜ່ງ ຮອງນາຍບ້ານ;
4. ຮູບດາວໃນວົງມົນ ໝາຍເຖິງ ບົດບາດຄວາມສຳຄັນ ຂອງອົງການປົກຄອງບ້ານ ໃນ ຖານະເປັນຮາກຖານໃຫ້ແກ່ການປົກຄອງທ້ອງຖິ່ນ.

## ໝວດທີ 3
## ການນຳໃຊ້ ແລະ ການສິ້ນສຸດການນຳໃຊ້ເຄື່ອງແບບ

**ມາດຕາ 5 ການນຳໃຊ້ເຄື່ອງແບບ**

ການນຳໃຊ້ຊຸດເຄື່ອງແບບແມ່ນນຳໃຊ້ສະເພາະນາຍບ້ານ ແລະ ຮອງນາຍບ້ານ ເພື່ອເຄື່ອນໄຫວວຽກງານຂອງ ອົງການປົກຄອງບ້ານ ໃນໂມງລັດຖະການ ແລະ ການປະຕິບັດວຽກງານ ທາງລັດຖະການເທົ່ານັ້ນ.

ການນຳໃຊ້ເຄື່ອງແບບນາຍບ້ານ ແລະ ຮອງນາຍບ້ານ ໃຫ້ນຳໃຊ້ທຸກໆວັນຈັນ, ໃສ່ເວລາເຂົ້າຮ່ວມກອງປະຊຸມ ແລະ ວັນສຳຄັນຕ່າງໆ; ສ່ວນວັນອື່ນໆແມ່ນໃສ່ຊຸດສຸພາບຕາມປົກກະຕິ ຫຼື ຫາກມີເງື່ອນໄຂກໍສາມາດໃສ່ຊຸດເຄື່ອງ ແບບກໍໄດ້.



สแกนด้วย CamScanner

**ມາດຕາ 6 ການສິ້ນສຸດການນຳໃຊ້ເຄື່ອງແບບ**

ການນຳໃຊ້ເຄື່ອງແບບ ສິ້ນສຸດ ເມື່ອ ນາຍບ້ານ ຫຼື ຮອງນາຍບ້ານ ພົ້ນຈາກຕຳແໜ່ງທີ່ໄດ້ກຳນົດໄວ້ໃນລະບຽບການ.

**ມາດຕາ 7 ງົບປະມານ**

ງົບປະມານໃນການຕັດເຄື່ອງແບບນາຍບ້ານ ແລະ ຮອງນາຍບ້ານ ແມ່ນມອບໃຫ້ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າຂຶ້ນແຜນຕາມຄວາມສາມາດ ແລະ ເງື່ອນໄຂຕົວຈິງແຕ່ລະໄລຍະ; ຫຼືກລ່ຽງການຜັນຂະຫຍາຍທີ່ມີລັກສະນະເປັນການລະດົມ ໃຫ້ບ້ານ ຫຼື ປະຊາຊົນ ປະກອບສ່ວນເພື່ອຕັດເຄື່ອງແບບ.

## ໝວດທີ 4
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 8 ຂໍ້ຫ້າມ**

ຂໍ້ຫ້າມກ່ຽວກັບເຄື່ອງແບບນາຍບ້ານ ແລະ ຮອງນາຍບ້ານ ມີດັ່ງນີ້:

1. ຫ້າມ ອອກແບບ ຫຼື ດັດແປງ ເຄື່ອງແບບ ທີ່ຂັດກັບຂໍ້ຕົກລົງສະບັບນີ້;
2. ຫ້າມ ນາຍບ້ານ, ຮອງນາຍບ້ານ ໃສ່ເຄື່ອງແບບ ໄປເຄື່ອນໄຫວວຽກງານ ທີ່ຂັດກັບຂໍ້ຕົກລົງສະບັບນີ້;
3. ຫ້າມບຸກຄົນໃດໜຶ່ງນຳໃຊ້ເຄື່ອງແບບນາຍບ້ານ.

**ມາດຕາ 9 ມາດຕະການຕໍ່ຜູ້ລະເມີດ**

ຜູ້ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ,ຕັກເຕືອນ ແລະ ຮັບຜິດຊອບຕາມລະບຽບ, ກົດໝາຍກຳນົດ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 10 ການຈັດຕັ້ງປະຕິບັດ**

1. ກົມການປົກຄອງທ້ອງຖິ່ນ ກະຊວງພາຍໃນ ເປັນຜູ້ຄຸ້ມຄອງເຄື່ອງແບບນາຍບ້ານ ແລະ ຮອງນາຍບ້ານ ພ້ອມທັງເປັນເຈົ້າການໃນການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ, ແນະນຳ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ;
2. ອົງການປົກຄອງທ້ອງຖິ່ນ ຂັ້ນແຂວງ ແລະ ຂັ້ນເມືອງ ຊຸກຍູ້ ແລະ ອຳນວຍຄວາມສະດວກດ້ານຕ່າງໆ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;
3. ພະແນກພາຍໃນ, ຫ້ອງການພາຍໃນ ເຜີຍແຜ່, ເຊື່ອມຊຶມ ຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດ ໃນການຄຸ້ມຄອງນຳໃຊ້ເຄື່ອງແບບໃຫ້ເໝາະສົມກັບສະພາບຄວາມສາມາດ ແລະ ເງື່ອນໄຂຕົວຈິງໃນແຕ່ລະທ້ອງຖິ່ນ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ບ່ອນນຳສົ່ງ:

1. ເກັບມ້ຽນ 01 ສະບັບ;
2. ພະແນກພາຍໃນ 18 ສະບັບ;
3. ຫ້ອງວ່າການລັດຖະບານ 01 ສະບັບ.

ປອ. ທອງຈັນ ມະນີໄຊ



สแกนด้วย CamScanner

## ເອກະສານຊ້ອນທ້າຍ:

**ຕົວຢ່າງ 1: ຊຸດເຄື່ອງແບບ ນາຍບ້ານ ແລະ ຮອງນາຍບ້ານ ສຳລັບເພດຍິງ.**

ຕົວຢ່າງ 1.1: ດ້ານໜ້າ ແລະ ດ້ານຫຼັງ ຂອງເສື້ອ.



ຕົວຢ່າງ 1.2: ສິ້ນຂອງນາຍບ້ານ ຫຼື ຮອງນາຍບ້ານ.





สแกนด้วย CamScanner

**ຕົວຢ່າງ 2: ຊຸດເຄື່ອງແບບ ນາຍບ້ານ ແລະ ຮອງນາຍບ້ານ ສຳລັບເພດຊາຍ.**

ຕົວຢ່າງ 2.1: ດ້ານໜ້າ ແລະ ດ້ານຫຼັງ ຂອງເສື້ອ.



ຕົວຢ່າງ 2.2: ດ້ານໜ້າ ແລະ ດ້ານຫຼັງ ຂອງໂສ້ງ.





สแกนด้วย CamScanner

## ຕົວຢ່າງ 3: ທະນູບ່າ ສຳລັບນາຍບ້ານ ແລະ ຮອງນາຍບ້ານ.

ຕົວຢ່າງ 3.1: ທະນູບ່າ ສຳລັບ ນາຍບ້ານ.




ຕົວຢ່າງ 3.2: ທະນູບ່າສຳລັບ ຮອງນາຍບ້ານ.






สแกนด้วย CamScanner